ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 3 ເມສາ 2505 ( 4-3-2005 )

---

## ສິ່ງຈຳເປັນ: ຄວາມເຊື່ອແທ້

ພື້ນຖານຂອງເຣື່ອງ : ( ຢາກບ 1:16-27; 2:14-26 )

ພຣະຄັມພີຂໍ້ສຳຄັນ : ( ຢາກບ 1:16-18, 21-27; 2,14-19 )

ຄວາມຈິງໃນພຣະຄັມພີ : ຄົນທີ່ເຊື່ອໄດ້ສະແດງອອກຄວາມເຊື່ອຂອງເຂົາເຈົ້າຕໍ່ພຣະເຈົ້າດ້ວຍການກະທຳທີ່ໃຫ້ກຽດແກ່ພຣະເຈົ້າ ແລະຊ່ອຍເຫລືອຕໍ່ຄວາມຕ້ອງການທີ່ຈຳເປັນຂອງຄົນອື່ນ.

ຜົນສະທ້ອນຕໍ່ຊີວິດ : ເພື່ອຊ່ອຍທ່ານໃຫ້ສະແດງຄວາມເຊື່ອໃນພຣະເຈົ້າຂອງທ່ານອອກມາດ້ວຍການກະທຳທີ່ໃຫ້ກຽດແກ່ພຣະເຈົ້າ ແລະຊ່ອຍເຫລືອຕໍ່ຄວາມຕ້ອງການທີ່ຈຳເປັນຂອງຄົນອື່ນ.

## ຂ້າພະເຈົ້າຈະສະແດງຄວາມເຊື່ອຈິງຂອງຂ້າພະເຈົ້າຕໍ່ພຣະເຈົ້າຢ່າງໃດ?

ນາງ ລີຊາ ເພື່ອນຂອງຂ້າພະເຈົ້າໄດ້ຮັບໃຊ້ເປັນຄຣູສອນພຣະຄັມພີຊາວໜຸ່ມໃນຄຣິສຕະຈັກຂອງນາງເປັນເວລາດົນນານແລ້ວ. ລູກສິດຂອງນາງຄົນນຶ່ງໄດ້ຍິນເຣື່ອງເຮືອນພັກເຊົາສຳລັບຄົນທີ່ບໍ່ມີບ້ານເຮືອນຕ້ອງການອາສາສມັກເສີບອາຫານ. ລູກສິດໄດ້ສເນີໃຫ້ໝົດຄະນະໃນຫ້ອງຮຽນໄປນຳກັນທັງໝົດເພື່ອຊ່ອຍເຫລືອໃນເຣື່ອງນີ້. ນາງລີຊາໄດ້ເຮັດໃຫ້ຄວາມຄິດອັນນີ້ໝົດກຳລັງໃຈລົງ ເພາະນາງເວົ້າວ່າຄົນທີ່ບໍ່ມີບ້ານເຮືອນສ່ວນຫລາຍນັ້ນເປັນຄົນຂີ້ຄ້ານແລະທັງເປັນຄົນທີ່ຂາດຄວາມຮັບຜິດຊອບ. ທ່ານໄດ້ເຫັນບັນຫາໃນຄຳຕອບຂອງນາງລີຊານີ້ບໍ່? ໃນສະພາບເຊັ່ນນີ້ທ່ານຄວນຈະເຮັດຢ່າງໃດ?

ໃນເວລາທີ່ທ່ານສຶກສາບົດຮຽນນີ້, ທ່ານຈະໄດ້ສັງເກດເຫັນສະພາບຂອງຄຣິສຕຽນແທ້. ທ່ານຈະໄດ້ຖືກທ້າທາຍໃຫ້ສະແດງຄວາມເຊື່ອຂອງທ່ານອອກມາດ້ວຍການກະທຳທີ່ໃຫ້ພຣະເຈົ້າຊົງພໍພຣະທັຍ ແລະຊ່ອຍເຫລືອຕໍ່ຄວາມຈຳເປັນຂອງຄົນອື່ນໃນທາງທີ່ປະຕິບັດອອກມາ.

## ສຶກສາພຣະຄັມພີ

1- ຈົ່ງຮັບເອົາພຣະຄຳແຫ່ງຄວາມພົ້ນຈາກພຣະເຈົ້າ : ( ຢາກບ 1:16-18,21 )

ຄົນອ່ານພຣະທັມຢາໂກໂບຄົນທຳອິດໄດ້ຢູ່ໃນການທົດລອງຫລວງຫລາຍ ( 1:2,12-13 ). ພວກເຂົາໄດ້ຖືກລໍ້ລວງໃຫ້ຄິດວ່າແມ່ນພຣະເຈົ້າເປັນຕົ້ນເຫດໃຫ້ເຂົາໄດ້ພົບກັບການທໍຣະມານຢ່າງສາຫັດ. ຢາໂກໂບໄດ້ຕັກເຕືອນເຂົາໃນເຣື່ອງການເຂົ້າໃຈຜິດພາດເຊັ່ນນີ້ດ້ວຍການເວົ້າວ່າ: " ຢ່າໄດ້ຫລົງຜິດໄປ. " ເພິ່ນຕ້ອງການຢາກໃຫ້ຄົນທີ່ເຊື່ອທີ່ເສັຽກຳລັງໃຈໄປນັ້ນໄດ້ຮູ້ຈັກວ່າພຣະເຈົ້າໄດ້ປະທານສິ່ງທີ່ດີເລີດ ແລະຂອງຂວັນທີ່ດີວິເສດແລ້ວ. ອັນນັ້ນກໍຄືທຸກຢ່າງທັງໝົດທີ່ມາຈາກພຣະອົງ ຊຶ່ງແມ່ນພົນທາງຂອງພຣະອົງເພື່ອຈັດຕຽມສິ່ງທີ່ຈຳເປັນແລະດີເລີດທີ່ສຸດໃຫ້ແກ່ເຮົາ.

ພຣະພອນອັນນັບບໍ່ຖ້ວນໄດ້ຫລັ່ງໄຫລລົງມາຈາກພຣະເຈົ້າຊຶ່ງເປັນເຫມືອນພຣະບິດາແຫ່ງບັນດາດວງສວ່າງ. ພຣະອົງປຽບເຫມືອນພໍ່ທີ່ມັກໃຫ້ຂອງຂວັນອັນດີຕໍ່ບຸດທັງຫລາຍຂອງຕົນ, ພຣະເຈົ້າທີ່ມີພຣະທັຍອັນກວ້າງຂວາງກໍ

ຊອບພຣະທັຍໃຫ້ຂອງຂວັນຕໍ່ພວກເຮົາ. ແລະແສງສວ່າງແຫ່ງຄວາມຮັກຂອງພຣະອົງກໍສາດແຈ້ງໃສ່ພວກເຮົາໂດຍບໍ່ມີປ່ຽນແປງຈັກເທື່ອ. ເຊັ່ນດຽວກັນກັບແສງສວ່າງຂອງພຣະອາທິດທີ່ບໍ່ປ່ຽນແປງ, ບໍ່ມືວເສົ້າຈັກເທື່ອ, ພຣະເຈົ້າກໍເປັນຜູ້ຊົງຈັດຕຽມທຸກຢ່າງໃຫ້ແກ່ພວກເຮົາທີ່ບໍ່ປ່ຽນແປງຈັກເທື່ອຊຶ່ງພວກເຮົາສາມາດວາງໃຈແລະສັດຊື່ຕໍ່ພຣະອົງໄດ້. ຄຳທີ່ວ່າ " ເງົາເນື່ອງຈາກການຊົງຫມູນວຽນ " ອາດຈະປຽບເຫມືອນດັ່ງຄວາມມືວມິດທີ່ມາຈາກການຫມູນວຽນຂອງໂລກກໍໄດ້ ເພາະວ່າໂລກກໍມີການຫມູນວຽນ. ແຕ່ພຣະເຈົ້ານັ້ນຈະບໍ່ຫມູນຫນີໄປຈາກເຮົາຈັກເທື່ອ ເພາະວ່າຄວາມຮັກຂອງພຣະອົງນັ້ນຫມັ້ນຄົງຕລອດໄປ.

ສິ່ງທີ່ມີຄວາມຫມາຍຫລາຍກວ່າຫມູ່ນັ້ນແມ່ນການຈັດຫາປະສົບການຂອງການເກີດໃຫມ່ຝ່າຍວິນຍານສຳລັບພວກເຮົາ. ພຣະກິດຕິຄຸນແມ່ນຂ່າວປະເສີດເຣື່ອງຄວາມຈິງທີ່ປຸກພວກເຮົາໃຫ້ຕື່ນຂຶ້ນມາເພື່ອໃຫ້ຮູ້ຈັກພຣະສັນຍາຂອງພຣະເຈົ້າໃນເຣື່ອງຊີວິດໃຫມ່ອັນນີ້. ຊຶ່ງຜົນທີ່ເກີດຂຶ້ນຈາກການວາງໃຈໃນພຣະເຢຊູນັ້ນ ພວກເຮົາກໍໄດ້ກາຍເປັນຜົນແຮກຂອງການຊົງສ້າງຂອງພຣະອົງ. ຕາມການສິດສອນຂອງພຣະຄັມພີເດີມນັ້ນ, ຜົນເກັບກ່ຽວທຳອິດຈາກພໍ່ນານັ້ນແມ່ນຈະຕ້ອງໄດ້ຖວາຍແດ່ພຣະເຈົ້າເພື່ອເປັນການສະແດງອອກເຖິງການຂອບພຣະຄຸນ ( ພບຍ 18:3-4 ). ຄົນທຸກຄົນທີ່ໄດ້ເກີດໃຫມ່ແລ້ວນັ້ນເປັນເຫມືອນຜົນແຮກສຳລັບພຣະເຈົ້າ, ເປັນສິ່ງພິເສດໃນບັນດາການາຊົງສ້າງຂອງພຣະອົງ.

ຢາໂກໂບໄດ້ມີຫລາຍຢ່າງທີ່ຈະເວົ້າໃນຂໍ້ 21 ເຣື່ອງຄຸນຄ່າຂອງພຣະຄຳຂອງພຣະເຈົ້າ. ໃນການເອີ້ນຄົນທີ່ອ່ານຈົດຫມາຍຂອງທ່ານວ່າ " ວ່ອງໄວໃນການຟັງ " ແລະໄດ້ຕັກເຕືອນເຣື່ອງໃຫ້ຊ້າໃນການຮ້າຍ( ຂໍ້ 19-20 ), ເພິ່ນຮຽກຮ້ອງໃຫ້ຄົນທີ່ເຊື່ອທັງຫລາຍໃຫ້ນ້ອມໃຈຮັບເອົາພຣະທັມທີ່ປູກຝັງໄວ້ນັ້ນ. ການໄດ້ຍິນພຣະທັມຂອງພຣະເຈົ້າແມ່ນຈຸດເຣີ່ມຕົ້ນໃນການຮັບເອົາດ້ວຍຈິດໃຈທີ່ຖ່ອມລົງ. ຄົນໃດຫາກນ້ອມໃຈຍອມຮັບເອົາຄວາມຈິງນັ້ນ ແມ່ນເປັນຜູ້ຮູ້ຈັກອຳນາດຂອງພຣະທັມ ແລະເຮັດຕາມຄຳສອນນັ້ນ. ຢາໂກໂບໄດ້ໃຊ້ຄຳວ່າ " ປູກພຣະທັມ " ເພື່ອຈະເຮັດໃຫ້ເປັນເຫມືອນກັນກັບແນວປູກທີ່ຈະປົ່ງຮາກລົງໃນດິນດີ ແລະເກີດຜົນຢ່າງດົກຫນາເພື່ອການເກັບກ່ຽວ.

ຈົ່ງຈົດຈຳອຳນາດຂອງພຣະທັມນັ້ນ ເພາະມັນສາມາດທຳໃຫ້ທ່ານພົ້ນໄດ້. ຄວາມພົ້ນກ່ຽວພັນກັບການເກີດໃຫມ່ ແຕ່ວ່າມັນກໍເວົ້າເຖິງການເຮັດໃຫ້ຄຣິສຕຽນໄດ້ພົ້ນຈາກຄວາມເປື່ອຍເນົ່າ, ເຊັ່ນຄວາມເສື່ອມໂຊມດ້ານສິນທັມແລະຄວາມຊົ່ວຊາມທີ່ໄດ້ກ່າວໄວ້ແລ້ວໃນຕອນຕົ້ນ. ແທ້ຈິງແລ້ວ, ມີທາງດຽວທີ່ຄົນໃດຄົນນຶ່ງຈະມີໄຊເຫນືອຄວາມບາບໄດ້ກໍຕໍ່ເມື່ອຄົນໆນັ້ນໄດ້ທວງເອົາຄຳສັນຍາໃນພຣະທັມຂອງພຣະເຈົ້າ.

| |
|---|
| ຄົນເຊື່ອຄົນໃດທີ່ເຫັນວ່າການດຳຣົງຊີວິດທີ່ຖືກນ້ຳພຣະທັຍພຣະເຈົ້າເປັນເຣື່ອງສຳຄັນນັ້ນ ຕ້ອງຝຶກຝົນນິສັຍໃນການຄົ້ນຄວ້າພຣະຄຳ, ແລະແລ້ວກໍປະຕິບັດໄປຕາມທີ່ພຣະວິນຍານຊົງສະແດງໃຫ້ຮູ້ນັ້ນ. |

ອົງພຣະຜູ້ເປັນເຈົ້າຂອງພວກເຮົາໄດ້ສະແດງໃຫ້ເຫັນຄວາມເລິກລັບຂອງໄຊຊະນະເຫນືອການທົດລອງຂອງຊາຕານດ້ວຍການທີ່ພຣະອົງເອງເປັນຕົວຢ່າງໃນການຕໍ່ສູ້ກັບຜູ້ລໍ້ລວງ ( ເບິ່ງ ມທ 4:1-11 ). ເມື່ອມານທົດລອງພຣະເຢຊູ: ພຣະຜູ້ເປັນເຈົ້າຂອງເຮົາໄດ້ເອົາຊະນະມັນດ້ວຍການເວົ້າພຣະຄຳ. ພວກເຮົາກໍເຊັ່ນດຽວກັນ, ຄວນຈະໄດ້ອີງໃສ່ອຳນາດຂອງພຣະຄຳຂອງພຣະເຈົ້າຄືກັນ ເພື່ອຈະເອົາຊະນະກັບສັຕຣູຕົວດຽວກັນ.

<u>2- ຈົ່ງທຳຕາມພຣະປະສົງຂອງພຣະເຈົ້າທີ່ໄດ້ສະແດງອອກມາ :</u> ( ຢກບ 1:22-27 )

ຄົນທີ່ເຮັດຕາມພຣະຄຳຂອງພຣະເຈົ້າເປັນຄົນທີ່ມີລັກສະນະ ແລະການປະພຶດອັນສົມບູນຕາມການສິດສອນຂອງພຣະຄັມພີ. ພຣະເຢຊູໄດ້ເນັ້ນຄວາມຈິງນີ້ເມື່ອພຣະອົງໄດ້ປະກາດວ່າ, " ຜູ້ທີ່ມີຂໍ້ບັນຍັດຂອງເຮົາແລະຖືຂໍ້ບັນຍັດນັ້ນ ຜູ້ນັ້ນແຫລະ, ເປັນຜູ້ທີ່ຮັກເຮົາ " ( ຢຮ 14:21 ).

ຢາໂກໂບໄດ້ຕັກເຕືອນບໍ່ໃຫ້ລໍ້ລວງຕົນເອງດ້ວຍການບໍ່ເປັນຜູ້ທຳຕາມພຣະທັມ. ຄົນທີ່ໄປໂບດອາດຈະສລຸບຢ່າງຜິດພາດໄປວ່າ ຄວາມສຳພັນອັນແທ້ຈິງກັບພຣະເຈົ້ານັ້ນແມ່ນອີງໃສ່ການໄປໂບດ ແທນທີ່ຈະແມ່ນການຟັງຄວາມ.

ຢາໂກໂບໄດ້ໃຊ້ປະສົບການຂອງຄົນທີ່ເບິ່ງຫນ້າຕົນເອງໃນແວ່ນ ເພື່ອຈະອະທິບາຍຈຸດນີ້. ສົມມຸດວ່າຄົນທີ່

ເບິ່ງໜ້າຕົນເອງນັ້ນໄດ້ເຫັນຮອຍເປື້ອນໃນໜ້າຂອງຕົນເອງ, ແຕ່ວ່າໄດ້ຍ່າງໜີອອກໄປໂດຍບໍ່ໄດ້ເຊັດຮອຍເປື້ອນນັ້ນອອກເລີຍ. ຢາໂກໂບໄດ້ປຽບຄົນໆນີ້ເໝືອນກັບຄົນທີ່ໄດ້ຍິນຄວາມຈິງຈາກພຣະຄຳຂອງພຣະເຈົ້າໃຫ້ປ່ຽນຢ່າງໃດຢ່າງນຶ່ງໃນຊີວິດຂອງລາວ, ແຕ່ວ່າລາວບໍ່ໄດ້ເຮັດຫຍັງເລີຍ.

ຢາໂກໂບໄດ້ສເນີຕົວຢ່າງຂອງການລໍ້ລວງຕົນເອງທີ່ເພິ່ນໄດ້ຕັກເຕືອນນັ້ນໃນຂໍ້ 22. ຄົນໃດທີ່ຄິດວ່າຕົນເອງເປັນຄົນສິນທັມ, ໂດຍຄິດວ່າຕົນມີຄວາມສັມພັນອັນດີກັບພຣະເຈົ້າເພາະການປາກົດຈາກການກະທຳທາງສາສນາພາຍນອກ ແຕ່ວ່າບໍ່ໄດ້ຫ້າມລີ້ນຕົນເອງນັ້ນ, ຄົນໆນັ້ນກໍໄດ້ລໍ້ລວງຈິດໃຈຂອງຕົນເອງ ທັງການນັບຖືຂອງຕົນກໍໄຮ້ປໂຍດດ້ວຍ. ໃນທີ່ນີ້ເພິ່ນຍັງໄດ້ເນັ້ນເຖິງເຣື່ອງທີ່ກ່ຽວກັນຣະຫວ່າງການຮູ້ຈັກສິ່ງໃດດີ ແຕ່ພັດເຮັດສິ່ງທີ່ບໍ່ດີອີກດ້ວຍ. ຖ້າຄຳເວົ້າຂອງຄົນທີ່ມີສິນທັມນັ້ນຫາກບໍ່ເປັນໄປຕາມຫລັກການຂອງພຣະຄັມພີແລ້ວ ຄວາມເຊື່ອກໍໄຮ້ຄ່າ. ຄຳເວົ້າຂອງພວກເຮົາຄວນຈະຕ້ອງໃຫ້ສອດຄ່ອງກັບພຣະຄຳຂອງພຣະເຈົ້າ.

ຄວາມເຊື່ອທີ່ບໍຣິສຸດຕ້ອງພິສູດໄດ້ດ້ວຍການກະທຳແລະຄວາມຮັກຄວາມສົງສານ, ເຊັ່ນໃນກໍຣະນີການດູແລເດັກກຳພ້າແລະບັນດາແມ່ໝ້າຍໃນຄວາມທຸກຍາກຂາດເຂີນຂອງເຂົາ. ຄົນເຫລົ່ານີ້ເປັນຄົນທີ່ຊ່ອຍຕົນເອງບໍ່ໄດ້ກວ່າໝູ່ທັງໝົດໃນສັງຄົມ, ພວກເຂົາເຈົ້າມີຊັບສິນບັດນ້ອຍ; ພວກເຂົາເຈົ້າເປັນຄົນທຸກຈົນແທ້ ( ພສສ 82:3-4 ). ຍັງບໍ່ພຽງແຕ່ເທົ່ານີ້, ຢາໂກໂບຍັງໄດ້ຮຽກຮ້ອງມາຍັງຄົນທີ່ອ່ານພຣະຄຳນີ້ໃຫ້ຮັກສາຕົນໃຫ້ພົ້ນຈາກຄວາມດ່າງພ້ອຍຂອງໂລກນີ້ອີກດ້ວຍ. ການຕັກເຕືອນນີ້ໝາຍເຖິງການເປື້ອນເປິະດ້ານສິນທັມທີ່ມາຈາກສັງຄົມທີ່ບໍ່ຮູ້ຈັກພຣະເຈົ້າ.

ດັ່ງນັ້ນພວກເຮົາຈຶ່ງເຂົ້າໃຈທັງສອງແງ່ທັງດ້ານບວກແລະດ້ານລົບຂອງຊີວິດທີ່ພໍພຣະທັຍພຣະເຈົ້າ. ການຕ້ານທານຕໍ່ອິດທິພົນຂອງຄວາມຊົ່ວທີ່ທຳໃຫ້ລັກສະນະຂອງຄົນເສື່ອມເສັຽນັ້ນຕ້ອງໃຫ້ມັນເຂົ້າກັນກັບການກະທຳທີ່ເປັນດ້ານບວກຂອງການຮັບໃຊ້ຄົນທີ່ທຸກຍາກຂາດເຂີນ. ບໍ່ມີແງ່ໃດແງ່ນຶ່ງທີ່ຈະຢືນຢູ່ຝ່າຍດຽວໄດ້. ລັກສະນະທັງສອງຢ່າງ ແລະການປະພຶດຄວນຈະຕ້ອງເໝາະສົມກັບຄວາມເຊື່ອຂອງຄົນທີ່ເຊື່ອນັ້ນ.

<u>3- ຈົ່ງສະແດງຄວາມເຊື່ອຂອງທ່ານອອກມາດ້ວຍການກະທຳ :</u> ( ຢກບ 2:14-19 )

ມີຄວາມເຊື່ອຢູ່ສອງຢ່າງ, ຄວາມເຊື່ອທີ່ປາສຈາກການກະທຳອັນດີທີ່ຢາໂກໂບໄດ້ເວົ້າມານັ້ນ ເອີ້ນວ່າຄວາມເຊື່ອທີ່ຕາຍແລ້ວ ( ຂໍ້ 17,26 ), ແລະຄວາມເຊື່ອທີ່ສະແດງອອກມາ ດ້ວຍການກະທຳທີ່ມີຄວາມເອັນດູສົງສານນັ້ນແມ່ນຄວາມເຊື່ອແທ້. ຢາໂກໂບໄດ້ຖາມວ່າ, ຖ້າຜູ້ໃດຈະເວົ້າວ່າຕົນມີຄວາມເຊື່ອແຕ່ບໍ່ມີການປະຕິບັດນັ້ນຈະມີປໂຍດອັນໃດ? ນີ້ແມ່ນຄົນທີ່ບອກວ່າຕົນເປັນຄຣິສຕຽນ, ແຕ່ວ່າບໍ່ໄດ້ສະແດງຄວາມເຊື່ອອອກມາດ້ວຍການປະຕິບັດທີ່ຟັງຄວາມພຣະເຈົ້າ. ຄຳຖາມທີ່ຍົກອອກມາຈາກຄວາມເຊື່ອທີ່ເປັນໝັນຢ່າງນີ້ຄື: ຄວາມເຊື່ອຢ່າງນີ້ຈະຊ່ອຍໃຫ້ລາວພົ້ນໄດ້ຫລື? ຈະເວົ້າອີກຢ່າງນຶ່ງກໍຄື, ຄວາມເຊື່ອທີ່ບໍ່ມີການປະຕິບັດເປັນຄວາມເຊື່ອແບບດຽວກັນກັບຄວາມເຊື່ອທີ່ເປັນເຫດໃຫ້ໄດ້ຮັບຄວາມພົ້ນຫລື?

ຢາໂກໂບໄດ້ຖາມຕໍ່ໄປໃນຂະນະທີ່ເພິ່ນໄດ້ຍົກຕົວຢ່າງທີ່ໝາຍເຖິງຄວາມເຊື່ອທີ່ບໍ່ມີການປະຕິບັດ. ລອງສົມມຸດວ່າ ຄຣິສຕຽນຄົນນຶ່ງທີ່ເປັນຊາຍຫລືຍິງທີ່ບໍ່ມີເຄື່ອງນຸ່ງຫົ່ມ ແລະຂາດເຂີນອາຫານຈະກິນແຕ່ລະວັນ ເບິ່ງດູ. ຖ້າຫາກວ່າການຕອບຂອງທ່ານຕໍ່ຄວາມຈຳເປັນອັນນີ້ດ້ວຍພຽງຄຳວ່າ, " ຈົ່ງໄປເປັນສຸກເທີ້ນ, ຈົ່ງໃຫ້ທ່ານອົບອຸ່ນດີແລະທ້ອງອິ່ມເທີ້ນ " ? ຄຳເວົ້າເຫລົ່ານີ້ຈະບັນເທົາຄວາມຕ້ອງການອັນຈຳເປັນໃນເຣື່ອງເສື້ອຜ້າແລະອາຫານບໍ່? ແນ່ນອນຈະບໍ່ເປັນດັ່ງນັ້ນດອກ! ໃນທາງດຽວກັນຄວາມເຊື່ອ ຖ້າຫາກບໍ່ມີການປະຕິບັດແລ້ວ ມັນກໍຕາຍໃນຕົວຂອງມັນເອງ. ຄວາມເຊື່ອແທ້ ຄືຄວາມເຊື່ອທີ່ມີຊີວິດ ຟັງຄຳສັ່ງຂອງພຣະເຢຊູທີ່ໃຫ້ " ຮັກເພື່ອນບ້ານເໝືອນດັ່ງຮັກຕົນເອງ " ( " ເປັນພຣະຣາຊບັນຍັດ " ຂໍ້ 8 ). ມັນມີຄວາມໝາຍວ່າກະທຳສິ່ງທີ່ຊິດຊ່ອຍຫລືບັນເທົາທຸກແກ່ຄົນທີ່ຂາດເຂີນແທ້.

ຕໍ່ໄປນີ້, ຢາໂກໂບສົມມຸດການໂຕ້ຖຽງຣະຫວ່າງຄົນສອງຄົນທີ່ວ່າຕົນໄດ້ເຊື່ອ. ຄົນນຶ່ງເປັນຄົນທີ່ເຊື່ອແທ້ທີ່ສະແດງອອກດ້ວຍການປະຕິບັດ; ຄົນນຶ່ງອີກນັ້ນກໍມີຄວາມເຊື່ອແຕ່ບໍ່ໄດ້ສະແດງອອກມາຊຶ່ງການປະຕິບັດຊຶ່ງເປັນຄວາມເຊື່ອທີ່ຕາຍແລ້ວ. ຄົນທຳອິດເວົ້າຕໍ່ຄົນທີສອງວ່າ, " ເຈົ້າມີຄວາມເຊື່ອ, ແລະຂ້ອຍມີການປະຕິບັດ." ຈົ່ງສະແດງຄວາມເຊື່ອຂອງເຈົ້າທີ່ບໍ່ມີການປະຕິບັດອອກມາເບິ່ງດູ, ສ່ວນຂ້ອຍຈະສະແດງຄວາມເຊື່ອຂອງຂ້ອຍໃຫ້ເຈົ້າໄດ້ເຫັນ

ດ້ວຍການປະຕິບັດຂອງຂ້ອຍ. ເຣື່ອງຂອງການສົນທະນານີ້ແມ່ນວ່າຄວາມເຊື່ອທີ່ແທ້ຈິງນັ້ນສາມາດເຫັນໄດ້, ຜົນຂອງມັນສາມາດເຫັນໄດ້ງ່າຍໆດ້ວຍການປະຕິບັດທີ່ໄດ້ສະແດງອອກມາ. ນອກເຫນືອຈາກການປະຕິບັດແລ້ວ ກໍບໍ່ເຫັນຫລັກຖານຂອງຄວາມເຊື່ອອັນແທ້ຈິງອັນໃດເລີຍ.

ຄົນທີ່ອ່ານພຣະທັມຢາໂກໂບຢ່າງຫລວງຫລາຍແມ່ນມາຈາກພື້ນຖານຂອງຄົນຢິວ. ຄວາມຈິງທີ່ວ່າມີພຣະເຈົ້າອົງດຽວນັ້ນແມ່ນການສິດສອນທີ່ເປັນພື້ນຖານມາຈາກພຣະຄັມພີເດີມ, " ຊາວອິສຣາເອັນເອີຍຈົ່ງຟັງເທີ້ນ, ພຣະຜູ້ເປັນເຈົ້າອົງດຽວເທົ່ານັ້ນທີ່ເປັນພຣະເຈົ້າຂອງເຮົາ ( ພບຍ 6:4 ). ຢາໂກໂບໄດ້ສັ່ງຄົນທີ່ອ່ານໃຫ້ເຊື່ອຢ່າງນີ້: ຈົ່ງໄປເປັນສຸກເທີ້ນ. ແຕ່ວ່າເພິ່ນໄດ້ກ່າວເນັ້ນຕໍ່ຄວາມເຫັນໃນຄວາມເຊື່ອຢ່າງນີ້ວ່າມັນສົມຄວນຈະຕິດຕາມໄປດ້ວຍການກະທຳທີ່ສະແດງເຖິງການເຊື່ອຟັງທີ່ແທ້ຈິງຕໍ່ພຣະເຈົ້າອົງດຽວ. ຄວາມເນັ້ນຢ່າງແຂງແຮງໃນຄວາມສຳຄັນຂອງຄວາມເປັນອັນນຶ່ງອັນດຽວກັນຂອງຄວາມເຊື່ອແລະການປະຕິບັດໄດ້ເກີດຂື້ນເມື່ອເພິ່ນໄດ້ຖືກບັນດົນໃຈໃຫ້ຕັກເຕືອນພວກເຮົາວ່າມານຊາຕານມັນກໍໄດ້ເຊື່ອເຫມືອນກັນຈົນຕົວສັ່ນ ເພາະວ່າມັນຮູ້ຈັກວ່າພຣະເຈົ້າແມ່ນຜູ້ໃດ. ແຕ່ວ່າຄວາມເຊື່ອຂອງມັນແມ່ນຄວາມເຊື່ອທີ່ບໍ່ເຮັດໃຫ້ພົ້ນໄດ້ ເພາະວ່າມັນປະຕິເສດບໍ່ຍອມຢູ່ໃຕ້ພຣະເຈົ້າ.

ນັກສຶກສາພຣະຄັມພີບາງຄົນເຫັນຄວາມເຫັນແຕກຕ່າງກັນຣະຫວ່າງຄຳສອນຂອງໂປໂລເຣື່ອງຄວາມພົ້ນດ້ວຍພຣະຄຸນທາງຄວາມເຊື່ອອອກຫ່າງກັນຈາກຄວາມພົ້ນເພາະການປະຕິບັດ ( ຈົ່ງເບິ່ງ ອຟຊ 2:8-10 ) ແລະການຢືນຢັນຂອງຢາໂກໂບທີ່ວ່າການປະຕິບັດເປັນສິ່ງທີ່ຈຳເປັນສຳລັບຄວາມເຊື່ອແທ້ຈິງນັ້ນ. ເຖິງຢ່າງໃດກໍດີ, ຄວາມແຕກຕ່າງກໍແມ່ນການເນັ້ນຫນັກ. ໂປໂລໄດ້ໃຊ້ຄຳວ່າປະຕິບັດຄືເຮັດຕາມພິທີການຂອງພຣະບັນຍັດ, ເຊັ່ນພິທີຕັດເປັນເປັນຕົ້ນ. ໂປໂລຢືນຢັນວ່າຄົນທີ່ຖືວ່າຊອບທັມຕໍ່ພຣະເຈົ້າແມ່ນຜົນມາຈາກຄວາມເຊື່ອຢ່າງດຽວ, ບໍ່ໃຊ່ວ່າຄວາມເຊື່ອທີ່ບວກກັບການປະຕິບັດ. ອີກດ້ານນຶ່ງນັ້ນ, ຢາໂກໂບບອກວ່າຄວາມເຊື່ອທີ່ເຮັດໃຫ້ມີຄວາມພົ້ນນັ້ນແມ່ນຄວາມເຊື່ອທີ່ຕ້ອງຟັງຄວາມພຣະເຈົ້າ.

ໂປໂລເຫັນພ້ອມກັບຄວາມສຳຄັນຂອງຄວາມເຊື່ອທີ່ສະແດງອອກມາດ້ວຍການປະຕິບັດ ເມື່ອເພິ່ນໄດ້ເວົ້າເຖິງພວກທີ່ໄດ້ພົ້ນໂດຍຄວາມເຊື່ອວ່າ, " ເພາະວ່າເຮົາທັງຫລາຍເປັນສີພຣະຫັດຂອງພຣະອົງ ທີ່ຊົງສ້າງຂື້ນໃນພຣະເຢຊູຄຣິດ ເພື່ອໃຫ້ປະກອບການດີ " ( ອຟຊ 2:10 ). ບໍ່ມີຄວາມຂັດກັນໃນການສອນຂອງພຣະຄຳໃນເຣື່ອງ: ຄວາມເຊື່ອອັນແທ້ຈິງຕໍ່ພຣະເຈົ້າແມ່ນຕ້ອງໄດ້ສະແດງອອກດ້ວຍການປະຕິບັດທີ່ເປັນການໃຫ້ກຽດພຣະເຈົ້າ ແລະເພື່ອບັນເທົາຕໍ່ຄວາມຕ້ອງການອັນຈຳເປັນຂອງຄົນອື່ນ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )